**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0144 /ອຄ

ນະຄອນຫຼວງວຽງຈັນ, ວັນທີ 31 ມັງກອນ 2024

# ຂໍ້ຕົກລົງ
# ວ່າດ້ວຍກາໝາຍຫັດຖະກຳ ແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍຫັດຖະກຳ ສະບັບເລກທີ 02/ສພຊ, ລົງວັນທີ 25 ກໍລະກົດ 2008;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມສົ່ງເສີມການຄ້າ ແລະ ຫັດຖະກຳ ສະບັບເລກທີ 0045/ກສຄຫ.ຫຖກ, ລົງວັນທີ 16 ມັງກອນ 2024.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄຸ້ມຄອງການນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ເພື່ອສ້າງຈິດສຳນຶກ ແລະ ຄວາມເຊື່ອໝັ້ນ ຕໍ່ຜະລິດຕະພັນຫັດຖະກຳລາວ ໂດຍຜ່ານການພິຈາລະນາ ແລະ ຮັບຮອງເອົາຜະລິດຕະພັນຫັດຖະກຳລາວ ທີ່ມີຄວາມໂດດເດັ່ນ, ມີຄຸນນະພາບ ແລະ ໄດ້ມາດຕະຖານ ແນໃສ່ຊຸກຍູ້, ສົ່ງເສີມຜະລິດຕະພັນຫັດຖະກຳລາວ ເພື່ອເປັນສິນຄ້າຈຳໜ່າຍຕະຫຼາດພາຍໃນ ແລະ ຕ່າງປະເທດໃຫ້ນັບມື້ນັບຫຼາຍຂຶ້ນ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ກາໝາຍຫັດຖະກຳ ແຫ່ງຊາດ**

ກາໝາຍຫັດຖະກຳ ແຫ່ງຊາດ ແມ່ນສັນຍາລັກຢັ້ງຢືນຜະລິດຕະພັນຫັດຖະກຳລາວ ທີ່ມີຄວາມໂດດເດັ່ນ, ມີຄຸນນະພາບ, ໄດ້ມາດຕະຖານ ແລະ ມີຄວາມປານີດສວຍງາມ.

ກາໝາຍຫັດຖະກຳ ແຫ່ງຊາດ ຂຽນເປັນ ພາສາລາວ "ກາໝາຍຫັດຖະກຳ ແຫ່ງຊາດ" ແລະ ຂຽນເປັນພາສາອັງກິດວ່າ " Lao National Handicraft Branding " ຂຽນຫຍໍ້ " LNHB ".

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ປະກອບການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຜູ້ລົງທຶນ, ເຈົ້າຂອງກິດຈະການ, ຜູ້ດຳເນີນການຜະລິດ ແລະ ຈຳໜ່າຍ ຜະລິດຕະພັນຫັດຖະກຳລາວ;

2. **ຊາວຊ່າງຫັດຖະກຳ** ໝາຍເຖິງ ຜູ້ຜະລິດ ຫຼື ດຳເນີນການ ກ່ຽວກັບຜະລິດຕະພັນຫັດຖະກຳລາວ ແລະ ນຳໃຊ້ເຄື່ອງມືອຸປະກອນເຂົ້າຊ່ວຍໃນຂະບວນການຜະລິດ ເປັນຕົ້ນ ຂັ້ນຕອນການແກະສະຫຼັກໄມ້, ຂັ້ນຕອນການຕັດຫຍິບ, ການຖັກ, ການແສ່ວ, ຂັ້ນຕອນການຕີເຄື່ອງປະດັບ ແລະ ເອ້ຍ້ອງ;

3. **ຜະລິດຕະພັນຫັດຖະກຳລາວ** ໝາຍເຖິງ ສິນຄ້າຫັດຖະກຳລາວ ທີ່ປະດິດສ້າງຈາກພູມປັນຍາທ້ອງຖິ່ນ ໂດຍຊາວຊ່າງທີ່ມີສີໄມ້ລາຍມື ຊຶ່ງສະແດງເຖິງຄວາມເປັນເອກະລັກ, ສິລະປະຂອງຊາດ ເພື່ອເປັນສິນຄ້າຈຳໜ່າຍຕະຫຼາດພາຍໃນ ແລະ ຕ່າງປະເທດ;

4. **ຄະນະກຳມະການພິຈາລະນາຜະລິດຕະພັນຫັດຖະກຳ** ໝາຍເຖິງ ຄະນະກຳມະການທີ່ຖືກແຕ່ງຕັ້ງ ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາຜະລິດຕະພັນຫັດຖະກຳລາວ ທີ່ມີເງື່ອນໄຂນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງປະກອບດ້ວຍບັນດາຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກ່ຽວກັບວຽກງານກາໝາຍຫັດຖະກຳ ແຫ່ງຊາດ.

## ໝວດທີ 2

## ອົງປະກອບ, ຄວາມໝາຍ ແລະ ຂະແໜງວິຊາຊີບຫັດຖະກຳ ທີ່ສາມາດນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ

**ມາດຕາ 5 ອົງປະກອບ ແລະ ຄວາມໝາຍ ຂອງກາໝາຍຫັດຖະກຳ ແຫ່ງຊາດ**

ກາໝາຍຫັດຖະກຳ ແຫ່ງຊາດ ມີອົງປະກອບ ຄື: ລາຍນາກ, ສີທອງເຂັ້ມ, ຮູບມື, ສາຍຄໍຂອງນາກ, ວົງມົນ, ຕົວໜັງສື ແລະ ຈາກໃຈລາວ ຊຶ່ງແຕ່ລະອົງປະກອບ ມີຄວາມໝາຍ ດັ່ງນີ້:

1. ລາຍນາກ ສະແດງເຖິງ ລາຍແບບພື້ນຖານໃນການຕຳ, ຄວັດແກະ ແລະ ແຕ້ມລວດລາຍ ທີ່ມີຄວາມໂດດເດັ່ນຂອງຫັດຖະກຳລາວ;

2. ສີທອງເຂັ້ມ ສະແດງເຖິງ ຫັດຖະກຳລາວ ທີ່ມີຄວາມເຂັ້ມແຂງ, ມີຮູບແບບເປັນເອກະລັກ ແລະ ຄຸນນະພາບ;

3. ຮູບມື ທີ່ເຊື່ອງຊ້ອນຢູ່ໃນລາຍຫົວນາກ ສະແດງເຖິງ ຫັດຖະກຳລາວ ທີ່ເຮັດດ້ວຍມື;

4. ສາຍຄໍຂອງນາກ ທີ່ມີຮູບຫົວໃຈ 7 ດວງຮ້ອຍກົມກຽວກັນ ສະແດງເຖິງ ຂະແໜງວິຊາຊີບຫັດຖະກຳລາວ ທັງ 7 ຂະແໜງ ທີ່ມີການພັດທະນາໄປພ້ອມກັນ;

5. ວົງມົນ ສະແດງເຖິງ ຄວາມພ້ອມພຽງກັນໃນການປົກປັກຮັກສາຫັດຖະກຳລາວ ໃນຂອບເຂດທົ່ວປະເທດ;

6. ຕົວໜັງສື ໃຊ້ແບບພິມທີ່ສະແດງເຖິງ ຕົວໜັງສືແບບພື້ນເມືອງລາວ;

7. ຈາກໃຈລາວ "Lao craft form the Heart" ແມ່ນ ຂໍ້ຄວາມທີ່ມີສັນຍາລັກ ບົ່ງບອກການຜະລິດຫັດຖະກຳ ຈາກໃຈຊາວຊ່າງຫັດຖະກຳລາວ.

**ຈາກໃຈລາວ**

*Lao Craft from the Heart*

**ມາດຕາ 6 ຂະແໜງວິຊາຊີບຫັດຖະກຳ ທີ່ສາມາດນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ຂະແໜງວິຊາຊີບຫັດຖະກຳ ທີ່ສາມາດນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ປະກອບມີ 7 ຂະແໜງ ດັ່ງນີ້:

1. ຂະແໜງແຜ່ນແພພື້ນເມືອງ ປະກອບດ້ວຍ: ການຕໍ່າຫູກ, ການຍ້ອມ, ປູກມອນ-ລ້ຽງມ້ອນ, ການປັກ, ການຫຍິບ, ການຖັກ, ການແສ່ວ, ລວຍລາຍດອກດວງ, ມັດໝີ່, ການອອກແບບ ຜະລິດຕະພັນຫັດຖະກຳ ເປັນຕົ້ນ ຜ້າປູໂຕະ, ຜ້າບ່ຽງ, ຊຸດຜ້າສິ້ນ, ຊຸດຜ້າຈານ, ຖົງຜ້າ ແລະ ອື່ນໆ.

2. ຂະແໜງໄມ້, ຫວາຍ ແລະ ໄມ້ປ່ອງ ປະກອບດ້ວຍ:

   1) ໄມ້ ມີຄື: ຮູບແກະສະຫຼັກລວດລາຍວັດທະນະທຳ, ຊຸດໂຕະຕັ່ງ, ແກະສະຫຼັກຖ້ວຍ, ບ່ວງ, ໄມ້ທູ່, ໂຖດອກໄມ້, ຮູບສັດຕ່າງໆ, ກອບຮູບ ແລະ ອື່ນໆ;

   2) ຫວາຍ ມີຄື: ເນັ້ນໃສ່ການຜະລິດຫັດຖະກຳ ເຄື່ອງເຮືອນ ແລະ ເຟີນີເຈີ ເປັນຕົ້ນ ຊຸດໂຕະຕັ່ງ, ກະເປົາ, ພາເຂົ້າ, ພາຖາດ ແລະ ອື່ນໆ;

   3) ໄມ້ປ່ອງ ມີຄື: ໂຄມໄຟ, ພາເຂົ້າ, ພາຖາດ, ຕິບເຂົ້າ, ຫວດ, ກະຕ່າ, ກະເປົາ ແລະ ອື່ນໆ.

3. ຂະແໜງເຈ້ຍພື້ນເມືອງ ປະກອບດ້ວຍ: ຜະລິດເຈ້ຍປໍສາ ເປັນຕົ້ນ ໂຄມໄຟ, ຄັນຮົ່ມເຈ້ຍ, ສຳລັບແຕ້ມ, ເປັນຂອງຕົບແຕ່ງຕ່າງໆ ແລະ ນຳໃຊ້ເຂົ້າໃນການຫຸ້ມຫໍ່ ຜະລິດຕະພັນທີ່ມີຄວາມຫຼາກຫຼາຍ ແລະ ອື່ນໆ;

4. ຂະແໜງສິລະປະໂລຫະ ແລະ ອະໂລຫະ ປະກອບດ້ວຍ: ການຫຼອມ-ຫຼໍ່, ຄວັດ-ແກະສະຫຼັກ ເປັນຕົ້ນ ພ້າ, ມີດ, ຄ້ອນຕີ, ກ່ຽວ, ຄາດ, ຈອບ ແລະ ອື່ນໆ;

5. ຂະແໜງເຄື່ອງປັ້ນດິນເຜົາ ປະກອບດ້ວຍ: ໂຄມໄຟຫົວເສົາ, ໂຖດອກໄມ້, ໄຫ, ຖ້ວຍ, ຄົກ ແລະ ອື່ນໆ.

6. ຂະແໜງເຄື່ອງປະດັບ ແລະ ເຄື່ອງເອ້ຍ້ອງ ປະກອບດ້ວຍ: ຜະລິດຈາກວັດຖຸມີຄ່າ ເຊັ່ນ ເງິນ, ຄຳ, ອັນຍະມະນີ ເປັນຜະລິດຕະພັນ ແຫວນ, ຕຸ້ມຫູ, ສາຍຄໍ, ສາຍແຂນ, ສາຍແອວ ແລະ ອື່ນໆ.

7. ຂະແໜງອາຫານ ແລະ ເຄື່ອງດື່ມພື້ນເມືອງ ປະກອບດ້ວຍ:

1) ປະເພດອາຫານ ປຸງແຕ່ງຈາກຊີ້ນ, ໜັງ ແລະ ປາ ແລະ ພືດ ມາເປັນຜະລິດຕະພັນອາຫານ ຕົວຢ່າງ: ຊີ້ນແຫ້ງ, ປາແຫ້ງ, ໃສ້ກອກ, ແຈ່ວ, ໄຄ, ເຫັດອົບແຫ້ງ, ໝາກໄມ້ກວນ, ໝາກໄມ້ອົບແຫ້ງ ແລະ ອື່ນໆ.

2) ປະເພດເຄື່ອງດື່ມ ເຫຼົ້າພື້ນເມືອງ, ວາຍ, ນ້ຳໝາກໄມ້ ແລະ ອື່ນໆ.

## ໝວດທີ 3
## ເງື່ອນໄຂຜະລິດຕະພັນຫັດຖະກຳລາວ ແລະ ການຂໍນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ

### ມາດຕາ 7 ເງື່ອນໄຂຜະລິດຕະພັນຫັດຖະກຳລາວ ທີ່ສາມາດຂໍນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ

ຜະລິດຕະພັນຫັດຖະກຳລາວ ທີ່ສາມາດຂໍນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຄວາມໂດດເດັ່ນ, ຮູບແບບ, ລວດລາຍທີ່ເປັນເອກະລັກທ້ອງຖິ່ນ ຫຼື ມີປະຫວັດຄວາມເປັນມາທາງດ້ານວັດທະນາທຳ ແລະ ຮີດຄອງປະເພນີຂອງຊາດ;

2. ມີການປະດິດສ້າງປະສົມປະສານ ລະຫວ່າງ ແບບດັ້ງເດີມ ແລະ ແບບປະຍຸກ, ການອອກແບບຜະລິດຕະພັນ ທີ່ເປັນພູມປັນຍາທ້ອງຖິ່ນ;

3. ຂະບວນການຜະລິດມີຄວາມປອດໄພ, ໄດ້ມາດຕະຖານ ແລະ ເປັນມິດກັບສິ່ງແວດລ້ອມ;

4. ເປັນຜະລິດຕະພັນຫັດຖະກຳລາວ;

5. ນຳໃຊ້ວັດຖຸດິບ ພາຍໃນ ຢ່າງໜ້ອຍ 60%;

6. ເປັນຜະລິດຕະພັນຫັດຖະກຳ ທີ່ມີການຜະລິດຢ່າງຕໍ່ເນື່ອງ ສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ.

### ມາດຕາ 8 ຜະລິດຕະພັນຫັດຖະກຳລາວ ທີ່ບໍ່ສາມາດຂໍນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ

ຜະລິດຕະພັນຫັດຖະກຳລາວ ທີ່ບໍ່ສາມາດຂໍນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ມີດັ່ງນີ້:

1. ຜະລິດຕະພັນຫັດຖະກຳລາວ ທີ່ມີເງື່ອນໄຂບໍ່ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;

2. ຜະລິດຕະພັນ ປອມແປງ ຫຼື ລະເມີດຊັບສິນທາງປັນຍາ;

3. ນຳໃຊ້ວັດຖຸດິບທີ່ນຳເຂົ້າຈາກຕ່າງປະເທດ ເກີນ 40%;

4. ຜະລິດຕະພັນ ທີ່ມີຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ;

5. ຜະລິດຕະພັນ ທີ່ບໍ່ສາມາດຜະລິດ, ໃຫ້ການສະໜອງຢ່າງຕໍ່ເນື່ອງ ແລະ ຍືນຍົງ;

6. ນຳໃຊ້ວັດຖຸດິບ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 9 ການປະກອບເອກະສານຂໍອະນຸຍາດນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ**

ຜູ້ທີ່ມີຈຸດປະສົງຂໍອະນຸຍາດນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ ໃຫ້ຍື່ນເອກະສານຕໍ່ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໂດຍປະກອບເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມຂອງກົມສົ່ງເສີມການຄ້າ ແລະ ຫັດຖະກໍາ;
2. ໃບມອບສິດ ກໍລະນີໃຫ້ຜູ້ຕາງໜ້າຍື່ນເອກະສານ;
3. ຜະລິດຕະພັນຫັດຖະກໍາຕົວຢ່າງ (ຕົວຈິງ ຫຼື ຮູບຖ່າຍ);
4. ສໍາເນົາໃບທະບຽນວິສາຫະກິດ ຫຼື ສະຫະກອນຫັດຖະກໍາ;
5. ສໍາເນົາໃບອະນຸຍາດດໍາເນີນກິດຈະການໂຮງງານ/ໂຮງຊ່າງຫັດຖະກໍາ ຫຼື ສູນສົ່ງເສີມຫັດຖະກໍາ.

**ມາດຕາ 10 ການພິຈາລະນາອອກໃບຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ**

ພາຍຫຼັງທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຕ້ອງນໍາສະເໜີຕໍ່ຄະນະກໍາມະການພິຈາລະນາຜະລິດຕະພັນຫັດຖະກໍາລາວ ເພື່ອຄົ້ນຄວ້າພິຈາລະນາຜະລິດຕະພັນຫັດຖະກໍາລາວ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ສິບ ວັນລັດຖະການ, ພາຍຫຼັງທີ່ຄະນະກໍາມະການພິຈາລະນາຜະລິດຕະພັນຫັດຖະກໍາລາວ ຮັບຮອງເອົາຜະລິດຕະພັນຫັດຖະກໍາລາວ ຖືກຕ້ອງ ແລະ ສອດຄ່ອງຕາມເງື່ອນໄຂແລ້ວ, ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຕ້ອງອອກໃບຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຮອງເປັນຕົ້ນໄປ.

ກໍລະນີເອກະສານ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນເອກະສານຊາບ ພາຍໃນ ຫ້າ ວັນລັດຖະການ ເພື່ອປັບປຸງແກ້ໄຂໃຫ້ຖືກຕ້ອງ.

ໃນກໍລະນີ ທີ່ບໍ່ສາມາດອອກໃບຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນເອກະສານຊາບ ພາຍໃນ ສິບ ວັນລັດຖະການ.

**ມາດຕາ 11 ຂອບເຂດຂອງການນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ**

ກາໝາຍທັດຖະກໍາ ແຫ່ງຊາດ ໃຫ້ນໍາໃຊ້ໃນຂອບເຂດ ດັ່ງນີ້:

1. ຕິດໃສ່ຜະລິດຕະພັນຫັດຖະກໍາລາວ ທີ່ໄດ້ຮັບການຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ;
2. ໃຊ້ໃນການໂຄສະນາ, ປະຊາສໍາພັນ ຜະລິດຕະພັນຫັດຖະກໍາລາວ ທີ່ໄດ້ຮັບການຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ ຄືດັ່ງນີ້:
    1) ສື່ທາງເອເລັກໂຕຣນິກ: ແມ່ນພາຫະນະໂຄສະນາໂດຍຜ່ານທາງ ລາຍການວິທະຍຸ, ໂທລະພາບ, ສື່ແບບໃໝ່ ຫຼື ລາຍການອິນເຕີເນັດປະເພດຕ່າງໆ ແລະ ສື່ອື່ນໆ.
    2) ສື່ສິ່ງພິມ ແມ່ນການໂຄສະນາທີ່ເປັນແຜ່ນເຈ້ຍ ຊຶ່ງບັນຈຸຂໍ້ມູນຂ່າວສານດ້ວຍຕົວໜັງສື ຫຼື ຮູບພາບ ໂດຍມີຊື່ສະເພາະ ເຊັ່ນ: ໜັງສືພິມ, ວາລະສານ, ໃບຂ່າວສານ, ຈົດໝາຍ.
    3) ປ້າຍໂຄສະນາ ແມ່ນປ້າຍທີ່ມີເນື້ອໃນນໍາສະເໜີ ສະຖານທີ່ການຜະລິດ, ຜະລິດຕະພັນສິນຄ້າ, ອຸປະໂພກ, ບໍລິໂພກ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການຕ່າງໆ.

3. ປຶ້ມແນະນຳ ການນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ "Brand Use Guidelines Lao National Handicraft Branding" ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈຢ່າງຈະແຈ້ງ ກ່ຽວກັບການນຳໃຊ້ເປັນເຄື່ອງມືທີ່ສຳຄັນທາງການຕະຫຼາດ ແລະ ສັນຍາລັກຂອງຜະລິດຕະພັນຫັດຖະກຳລາວ.

**ມາດຕາ 12 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ມີອາຍຸ ສາມ ປີ ແລະ ສາມາດຕໍ່ອາຍຸໄດ້ ແຕ່ຕ້ອງຍື່ນເອກະສານຂໍຕໍ່ອາຍຸ ກ່ອນວັນໝົດອາຍຸ ສາມສິບ ວັນ.

ຜູ້ທີ່ມີຈຸດປະສົງ ຂໍຕໍ່ອາຍຸໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ໃຫ້ຍື່ນເອກະສານຕໍ່ກົມສົ່ງເສີມການຄ້າ ແລະ ຫັດຖະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ພາຍໃນ ສາມສິບ ວັນກ່ອນໃບຢັ້ງຢືນດັ່ງກ່າວຈະໝົດອາຍຸ ໂດຍເອກະສານປະກອບ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມກົມສົ່ງເສີມການຄ້າ ແລະ ຫັດຖະກຳ;
2. ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ສະບັບຕົ້ນ;
3. ສຳເນົາໃບທະບຽນວິສາຫະກິດ ຫຼື ສະຫະກອນຫັດຖະກຳ;
4. ສຳເນົາໃບອະນຸຍາດດຳເນີນກິດຈະການໂຮງງານ/ໂຮງຊ່າງຫັດຖະກຳ ຫຼື ສູນສົ່ງເສີມຫັດຖະກຳ.

**ມາດຕາ 13 ການໂຈະ ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ;
2. ໂຈະພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຊຶ່ງຜູ້ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນກຳນົດເວລາ ສາມ ເດືອນ;
3. ນຳໃຊ້ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ໝົດອາຍຸ;
4. ນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ຕິດໃສ່ຜະລິດຕະພັນອື່ນ ທີ່ບໍ່ໄດ້ຮັບການຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ;
5. ນຳໃຊ້ວັດຖຸດິບທີ່ລະເມີດກົດໝາຍ ແລະ ລະບຽບການ;
6. ບໍ່ສາມາດດຳເນີນການຜະລິດຢ່າງຕໍ່ເນື່ອງ ເພື່ອສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;
7. ພົບເຫັນວ່າຜະລິດຕະພັນຫັດຖະກຳລາວ ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 14 ການຍົກເລີກ ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີຍົກເລີກດ້ວຍຄວາມສະໝັກໃຈ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນກຳນົດເວລາ ສາມ ເດືອນ ພາຍຫຼັງທີ່ຖືກສັ່ງໂຈະ;
3. ຍັງສືບຕໍ່ເຄື່ອນໄຫວໃນເວລາທີ່ຖືກສັ່ງໂຈະ;
4. ມີຄຳຕັດສິນຈາກສານປະຊາຊົນ ໃຫ້ຢຸດເຊົາການດຳເນີນທຸລະກິດ.

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ

**ມາດຕາ 15 ສິດ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ມີສິດ ດັ່ງນີ້:

1. ຕິດກາໝາຍຫັດຖະກຳ ແຫ່ງຊາດ ໃສ່ຜະລິດຕະພັນຫັດຖະກຳ ຕາມຂອບເຂດທີ່ໄດ້ຮັບອະນຸຍາດນຳໃຊ້;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
3. ປົກປັກຮັກສາຜະລິດຕະພັນຫັດຖະກຳລາວ ທີ່ເປັນມູນເຊື້ອຂອງຊາດ;
4. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮ່ວມມືໃນການສົ່ງເສີມການຜະລິດຫັດຖະກຳລາວ ໃຫ້ມີຄຸນນະພາບ ແລະ ໄດ້ມາດຕະຖານ.
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ພັນທະ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ມີພັນທະ ດັ່ງນີ້:

1. ດຳເນີນການຜະລິດຢ່າງຕໍ່ເນື່ອງ ເພື່ອສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;
2. ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
3. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຈາກການນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ;
4. ສະຫຼຸບລາຍງານການເຄື່ອນໄຫວທີ່ກ່ຽວຂ້ອງກັບການນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ໃຫ້ກົມສົ່ງເສີມການຄ້າ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ປະຈຳ ຫົກເດືອນ ແລະ ປີ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 17 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ກາໝາຍຫັດຖະກຳ ແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳເອົາກາໝາຍຫັດຖະກຳ ແຫ່ງຊາດ ໄປເຄື່ອນໄຫວ ຫຼື ການກະທຳຜິດກົດໝາຍ ແລະ ລະບຽບການ;
3. ປັບປຸງຮູບລັກສະນະ, ຂະໜາດສັດສ່ວນ ແລະ ສີສັນ ທີ່ແຕກຕ່າງຈາກຕົ້ນສະບັບ ຫຼື ປອມແປງ ກາໝາຍຫັດຖະກຳ ແຫ່ງຊາດ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 18 ຂໍ້ຫ້າມສໍາລັບຜູ້ທີ່ໄດ້ຮັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ**

ຫ້າມຜູ້ໄດ້ຮັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ມີພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ຕິດໃສ່ຜະລິດຕະພັນອື່ນ ທີ່ບໍ່ໄດ້ຮັບການໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ;

2. ປອມແປງ ເອກະສານ, ປົກປັ້ງຂໍ້ມູນຄວາມຈິງ ຫຼື ບໍ່ໃຫ້ການຮ່ວມມືແກ່ເຈົ້າໜ້າທີ່;

3. ເຄື່ອນໄຫວນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ໂດຍບໍ່ສອດຄ່ອງກັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ;

4. ນໍາໃຊ້ວັດຖຸດິບທີ່ນໍາເຂົ້າຈາກຕ່າງປະເທດ ຫຼາຍກວ່າ 40%,

5. ນໍາໃຊ້ໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ໝົດອາຍຸ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 19 ຂໍ້ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມສໍາລັບເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່ຕໍາແໜ່ງ, ສົມຮູ້ຮ່ວມຄິດ ຫຼື ມີວິທີການທຸກຮູບແບບ ເພື່ອຫາຜົນປະໂຫຍດ;

2. ທວງຖາມ, ຂໍ ຫຼື ຮັບສິນບົນ ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ;

3. ປະລະໜ້າທີ່ ຄວາມຮັບຜິດຊອບຂອງຕົນ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງວຽກງານກາໝາຍຫັດຖະກໍາ ແຫ່ງຊາດ

**ມາດຕາ 20 ການຄຸ້ມຄອງວຽກງານກາໝາຍຫັດຖະກໍາ ແຫ່ງຊາດ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ປະກອບມີ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ;

2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ;

3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງກົມສົ່ງເສີມການຄ້າ ແລະ ຫັດຖະກໍາ**

ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບວຽກງານຄຸ້ມຄອງກາໝາຍຫັດຖະກໍາ ແຫ່ງຊາດ ເພື່ອນໍາສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ ເຜີຍແຜ່ ແລະ ແນະນໍາ ຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ;

3. ພິຈາລະນາອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນນໍາໃຊ້ກາໝາຍທັດຖະກໍາ ແຫ່ງຊາດ;

4. ສະເໜີລັດຖະມົນຕີ ພິຈາລະນາແຕ່ງຕັ້ງຄະນະກໍາມະການພິຈາລະນາຜະລິດຕະພັນຫັດຖະກໍາລາວ ເພື່ອຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາຜະລິດຕະພັນຫັດຖະກໍາລາວ;

5. ໃຫ້ຄໍາປຶກສາ ແລະ ອໍານວຍຄວາມສະດວກ ເປັນຕົ້ນ ການສະໜອງຂໍ້ມູນຂ່າວສານ, ການເຂົ້າເຖິງແຫຼ່ງທຶນ, ການຕະຫຼາດ, ການຈັດຝຶກອົບຮົມວິຊາຊີບ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ໃຫ້ແກ່ຜູ້ປະກອບການ;

6. ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດການນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ;

7. ປະສານສົມທົບກັບຂະແໜງອື່ນ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ;

8. ສະຫຼຸບລາຍງານການຈັດຕັ້ງປະຕິບັດຄຸ້ມຄອງວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ໃຫ້ຂັ້ນເທິງຮັບຊາບຢ່າງເປັນປົກກະຕິ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະ ບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ຮັບ ແລະ ກວດກາເອກະສານ ສະເໜີຂໍອອກ, ຕໍ່ອາຍຸ, ໂຈະ ຫຼື ຍົກເລີກ ການນໍາໃຊ້ກາໝາຍຫັດຖະກໍາແຫ່ງຊາດ ແລ້ວນໍາສົ່ງໃຫ້ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ເພື່ອພິຈາລະນາຕາມຂັ້ນຕອນ;

3. ຊຸກຍູ້, ສົ່ງເສີມ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ;

4. ປະສານສົມທົບກັບຂະແໜງອື່ນ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ;

5. ສະຫຼຸບລາຍງານການເຄື່ອນໄຫວວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ປະຈໍາ ຫົກເດືອນ ແລະ ປະຈໍາປີໃຫ້ກົມສົ່ງເສີມການຄ້າ ແລະ ຫັດຖະກໍາ ຢ່າງເປັນປົກກະຕິ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ, ນະຄອນ.**

ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານກາໝາຍຫັດຖະກໍາ ແຫ່ງຊາດ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງໃນຂອບເຂດເມືອງ, ນະຄອນ ຂອງຕົນ;

2. ສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຊຸກຍູ້, ສົ່ງເສີມການເຄື່ອນໄຫວຂອງທີ່ໄດ້ຮັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ໃນຂອບເຂດເມືອງ, ນະຄອນຂອງຕົນ;

3. ຕິດຕາມ, ກວດກາ ການເຄື່ອນໄຫວນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ຂອງຜູ້ທີ່ໄດ້ຮັບໃບຢັ້ງຢືນນໍາໃຊ້ກາໝາຍຫັດຖະກໍາ ແຫ່ງຊາດ ໃນຂອບເຂດເມືອງ, ນະຄອນ ຂອງຕົນ;

4. ປະສານສົບທົບກັບຂະແໜງອື່ນ ກ່ຽວກັບວຽກງານກາໝາຍທັດຖະກຳ ແຫ່ງຊາດ;

5. ສະຫຼຸບລາຍງານການເຄື່ອນໄຫວວຽກງານກາໝາຍທັດຖະກຳ ແຫ່ງຊາດ ໃຫ້ພະແນກອຸດສາຫະກຳ ແລະ ຫັດຖະກຳ ແຂວງ, ນະຄອນຫຼວງ ປະຈຳ ທຸກເດືອນ ແລະ ປະຈຳປີ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສົ່ງເສີມການຄ້າ ແລະ ຫັດຖະກຳ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ